ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ທ່ານ ຜູ້ວ່າການ ໃຫ້ກຽດຕ້ອນຮັບເອກອັກຄະລັດຖະທູດ ແຫ່ງ ສະຫະລັດ ອາເມລິກາ ປະຈຳ ສປປ ລາວ



ໃນຕອນເຊົ້າຂອງວັນທີ 08 ສິງຫາ 2025, ທີ່ຫ້ອງຮັບແຂກຂອງ ທະນາຄານແຫ່ງ ສປປ ລາວ (ທຫລ), ທ່ານ ນ. ບຸນຄຳ ວໍລະຈິດ ຜູ້ວ່າການ, ທຫລ ພ້ອມດ້ວຍຄະນະຈາກກົມກ່ຽວຂ້ອງ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ທ່ານ ນ. ແຮັດເຕີ້ ວາເຣຍ ອາວາ, ເອກອັກຄະລັດຖະທູດ ແຫ່ງ ສະຫະລັດ ອາເມລິກາ ປະຈຳ ສປປ ລາວ ພ້ອມດ້ວຍຄະນະ.

ຈຸດປະສົງຂອງການຢ້ຽມຂໍ່ານັບໃນຄັ້ງນີ້ ແມ່ນເພື່ອສະແດງຄວາມຊົມເຊີຍຕໍ່ການຮັບຕຳແໜ່ງໃໝ່ຂອງ ທ່ານຜູ້ວ່າການ ພ້ອມທັງປຶກສາຫາລືກ່ຽວກັບແຜນການຮ່ວມມືໃນຕໍ່ໜ້າ. ພ້ອມດຽວກັນນີ້, ທ່ານ ທູດ ຍັງໄດ້ຍົກໃຫ້ເຫັນບັນຫາ ແລະ ສິ່ງທ້າທາຍ ທີ່ ສປປ ລາວ ກໍ່ຄື ທຫລ ຈະຕ້ອງໄດ້ປັບປຸງແກ້ໄຂ. ຢ່າງໃດກໍດີ, ສະຖານທູດ ສ. ອາເມລິກາ ກໍ່ມີຄວາມຍິນດີສືບຕໍ່ໃຫ້ການຊ່ວຍເຫຼືອແກ່ ທຫລ ໂດຍສະເພາະແມ່ນວຽກງານຕ້ານການຟອກເງິນ ແລະ ອື່ນໆ.

ໃນໂອກາດນີ້, ທ່ານ ຜູ້ວ່າການ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ຂອບໃຈມາຍັງ ເອກອັກຄະລັດຖະທູດ ແຫ່ງ ສະຫະລັດ ອາເມລິກາ ປະຈຳ ສປປ ລາວ ທີ່ໄດ້ໃຫ້ການຊ່ວຍເຫຼືອ ແລະ ສະໜັບສະໜູນ ໃຫ້ແກ່ ສປປ ລາວ ກໍ່ຄື ທຫລ ໃນໄລຍະຜ່ານມາ ໂດຍສະເພາະແມ່ນ ການຮ່ວມມືໃນວຽກງານການຝຶກອົບຮົມສຳມະນາ ພັດທະນາບຸກຄະລາກອນ ແລະ ການຮ່ວມມືໃນວຽກງານຕ້ານການຟອກເງິນ.





ໃນຕອນທ້າຍ, ທັງສອງຝ່າຍໄດ້ຕີລາຄາສູງການຮ່ວມມື ລະຫວ່າງ ສປປ ລາວ - ສ. ອາເມລິກາ ກໍ່ຄື ການຊ່ວຍເຫຼືອ ໃນຂະແໜງທະນາຄານ ແລະ ຫວັງຢ່າງຍິ່ງວ່າສະຖານທູດ ສ. ອາເມລິກາ ຈະສືບຕໍ່ຊຸກຍູ້ ແລະ ຊ່ວຍເຫຼືອ ທຫລ ໃນວຽກງານຕ່າງໆໃນຕໍ່ໜ້າ.

**ຂ່າວ: ກົມຮ່ວມມືສາກົນ**

**ພາບ: ສົມພິດ ທຳມະວົງ**

ຢູ່ເມືອງລາວໃຊ້ເງິນກີບລາວ